

# ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG)

## ຈົດໝາຍຂ່າວ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ
## ສະບັບທີ 2

ໄຕມາດທີ 2, ຕຸລາ - ທັນວາ 2017 22 ມັງກອນ 2018

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ແມ່ນເຄືອຂ່າຍໜຶ່ງຂອງອົງການຈັດຕັ້ງທາງສັງຄົມທີ່ໄດ້ເກີດຂຶ້ນໃນ ສປປ ລາວ ນັບແຕ່ປີ 2007 ເປັນຕົ້ນມາ. ການເຂົ້າເປັນສະມາຊິກຂອງ LIWG ມີ ສອງປະເພດຄື: ສະມາຊິກຫລັກ ແລະ ສະມາຊິກສະໜັບສະໜູນ. ກຸ່ມດັ່ງກ່າວນີ້ໄດ້ຖືກສ້າງຕັ້ງຂຶ້ນເພື່ອວ່າບັນດາສະມາຊິກຈະສາມາດແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນ ກ່ຽວກັບເລື່ອງທີ່ດິນ ແລະ ເພື່ອຮ່ວມກັນພັດທະນາການຍຸດທະສາດໃນການແກ້ໄຂບັນ ຫາປະເດັນທີ່ດິນທີ່ເກີດຂຶ້ນ.

## ເລື່ອງເດັ່ນປະຈຳໄຕມາດ...




*ບັນຍາກາດການສົນທະນາກ່ຽວກັບການນຳໃຊ້ປະຕິທິນກົດໝາຍປີ2018*

# ງານເປີດປະຕິທິນກົດໝາຍປີ 2018

ງານເປີດໂຕປະຕິທິນກົດໝາຍປະຈຳປີ 2018 ໄດ້ຈັດຂຶ້ນໃນວັນທີ 19 ທັນວາ 2017 ເຊິ່ງມີຈຸດປະສົງເພື່ອໃຫ້:

- ຜູ້ເຂົ້າຮ່ວມຮັບຮູ້ກົດໝາຍ ແລະ ກົດລະບຽບກ່ຽວກັບ ການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດພ້ອມດ່ຽວສິດທິຂັ້ນພື້ນຖານຂອງພົນ ລະເມືອງລາວ
- ເປີດໂອກາດໃຫ້ຜູ້ເຂົ້າຮ່ວມແລກປ່ຽນກ່ຽວກັບການນຳໃຊ້ ແລະ ປະຕິບັດ ກົດໝາຍ ແລະ ກົດລະບຽບໃນ ສປປ ລາວ
- ຜູ້ເຂົ້າຮ່ວມເຂົ້າໃຈໃນການນຳໃຊ້ປະຕິທິນນີ້ ເພື່ອເປັນເຄື່ອງມືໃນການໃຫ້ຄວາມຮູ້ດ້ານກົດໝາຍ ແລະ ກົດລະບຽບ ກ່ຽວກັບການຄຸ້ມຄອງທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ສິດທິຂັ້ນພື້ນຖານຂອງພົນລະເມືອງລາວ ແກ່ປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງທີ່ເຮັດວຽກໃນຂັ້ນທ້ອງຖິ່ນ

*ອ່ານລາຍລະອຽດໜ້າ 3……*



## ພາກເນື້ອໃນ:


- ການຈັດກອງປະຊຸມ ແລະ ການຝຶກອົບຮົມໂດຍ LIWG ....2
- ກຸ່ມເຮັດວຽກສະເພາະ ໜ່ວຍງານວິຊາການ ....3
- ກິດຈະກຳຂອງສະມາຊິກ ການລິເລີ່ມ ແລະ ຄູ່ຮ່ວມງານ LIWG ....4
- ຂ່າວເດັ່ນໃນໄຕມາດກ່ຽວກັບທີ່ດິນໃນລາວ....5
- ການສື່ສານຂໍ້ມູນຂ່າວສານຂອງ LIWG ....6
- ກິດຈະກຳໄຕມາດໜ້າ (ມັງກອນ – ມີນາ 2018) ....6
- ແຈ້ງການ ....6

# ການຈັດກອງປະຊຸມ ແລະ ການຝຶກອົບຮົມ ໂດຍ LIWG

## ກອງປະຊຸມຄະນະຊີ້ນຳ LIWG

ກອງປະຊຸມຄະນະຊີ້ນຳ LIWG ໄດ້ມີການຈັດຕັ້ງຂຶ້ນທຸກໆເດືອນ ເພື່ອເປັນການແຈ້ງໃຫ້ບັນດາຄະນະຊີ້ນຳ ໄດ້ຮັບຮູ້ກ່ຽວກັບ ການປະຕິບັດງານຂອງກອງເລຂາ. ໃນໄຕມາດນີ້ ກອງປະຊຸມຄະນະຊີ້ນຳໄດ້ມີການຈັດຂຶ້ນ 3 ຄັ້ງ.

## ກອງປະຊຸມສະມາຊິກຫຼັກ

ກອງປະຊຸມສະມາຊິກຫຼັກ ແມ່ນໄດ້ຮັບການຈັດຕັ້ງຂຶ້ນທຸກໆ 3 ເດືອນ ເພື່ອລາຍງານການເຮັດວຽກຂອງກອງເລຂາ LIWG ແລະ ໃນໄຕມາດນີ້ ແມ່ນໄດ້ຈັດຂຶ້ນໃນເດືອນຕຸລາ 2017. ກອປະຊຸມໄດ້ນຳສະເໜີປະເດັນຕ່າງໆລຸ່ມນີ້:

- ໜ້າວຽກຂອງກອງເລຂາ ກ່ຽວກັບການປະຕິບັດກິດຈະກຳທີ່ຜ່ານມາ ແລະ ແຜນໃນອະນາຄົດ ພ້ອມດ້ວຍປະເດັນງົບປະມານ.
- ທາງກອງເລຂາຍັງໄດ້ຖືໂອກາດໃນການລາຍງານກ່ຽວກັບຜົນສຳເລັດໃນການຈັດກອງກອງປະຊຸມສຳມະນາແລກ ປ່ຽນຄວາມຮູ້ ແລະ ບົດຮຽນກ່ຽວກັບການບໍລິຫານວຽກງານທີ່ດິນ ແລະ ຊັບພະຍາກອນທຳມະຊາດໃນແກ່ສະມາຊິກສະພາແຫ່ງຊາດ ໃນລະຫວ່າງວັນທີ 28-29 ກັນຍາ 2017.
- ການນຳສະເໜີກ່ຽວກັບກໍລະນີສຶກສາໂຄງການສ້າງເສັ້ນທາງລົດໄຟລາວ-ຈີນ ແລະ ການແຈ້ງສະນານະການລ່າສຸດກ່ຽວກັບໂຄງການດັ່ງກ່າວ ໂດຍສະເພາະຂະບວນການທົດແທນຄ່າເສຍຫາຍແກ່ຜູ້ທີ່ໄດ້ຮັບຜົນກະທົບ ເຊິ່ງເຫັນວ່າ ບໍ່ມີຂໍ້ມູນຊັດເຈນກ່ຽວກັບປະເດັນດັ່ງກ່າວໃນຊ່ວງໄລຍະການສຶກສາກໍລະນີນີ້. ການສົນທະນາກ່ຽວກັບປະເດັນດັ່ງກ່າວຈົບດ້ວຍຄຳຖາມທີ່ຍັງຄ້າງຄາວ່າ ແມ່ນໃຜແທ້ທີ່ເປັນເຈົ້າຂອງໂຄງການດັ່ງກ່າວ, ຈີນ ຫຼື ລາວ ?



*ການເຈາະອຸມົງເສັ້ນທາງລົດໄຟລາວ-ຈີນຢູ່ແຂວງຫຼວງພະບາງ, ປະເທດລາວ. ພາບໂດຍ ຊິນຫົວເນັດ*

- ສະມາຊິກ ຂອງ LIWG ໄດ້ນຳສະເໜີສະຖານະການລ່າສຸດຂອງປະເດັນຄວາມຂັດແຍ້ງດ້ານທີ່ດິນໃນແຂວງເຊກອງທີ່ເລີ່ມມາຕັ້ງແຕ່ຊ່ວງປີ 2006. ໃນກອງປະຊຸມ ຜູ້ນຳສະເໜີປະເດັນດັ່ງກ່າວຍັງໄດ້ຝາກໃຈຄວາມສຳຄັນໄວ້ວ່າ: ເຖິງເວລາແລ້ວທີ່ລະບົບຍຸດຕິທຳໃນລາວຕ້ອງໄດ້ຮັບການປັບປຸງ ແລະ ການປະຕິບັດຕ້ອງມີຄວາມໂປ່ງໃສ ແກ່ປະຊາຊົນ.

## ການລາຍງານຄືນບົດຮຽນຈາກການຝຶກອົບຮົມກ່ຽວກັບ ການລົງທຶນດ້ານກະສິກຳແບບຍືນຍົງ



*ສວນກ້ວຍຢູ່ທາງພາກເໜືອປະເທດລາວ. ພາບໂດຍ ຈັສຕິນ*

ກອງປະຊຸມແລກປ່ຽນບົດຮຽນກ່ຽວກັບ ການລາຍງານຄືນບົດຮຽນຈາກ "ການຝຶກອົບຮົມກ່ຽວກັບການລົງທຶນດ້ານກະສິກຳແບບຍືນຍົງ" ໄດ້ຈັດຂຶ້ນໂດຍ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ໃນວັນທີ 12 ຕຸລາ 2017 ທີ່ຫ້ອງການ ເຮວວິຕັດລາວ ແລະ ໄດ້ນຳສະ ເໜີໂດຍ ທ່ານນາງ ຈັສຕິນ ຊິລເວສເຕີ ເຊິ່ງເປັນໜຶ່ງໃນສະມາຊິກຂອງ LIWG. ການນຳສະເໜີດັ່ງກ່າວ ແມ່ນການລາຍງານຄືນກ່ຽວກັບກອງປະຊຸມ ຫົວຂໍ້ "ການພັດທະນາກະສິກຳແບບຍືນຍົງ" ທີ່ທ່ານນາງ ຈັສຕິນ ໄດ້ເຂົ້າຮ່ວມ ເຊິ່ງຈັດໂດຍ Columbia Centre for Sustainable Investment (CCSI) ໃນລະຫວ່າງວັນທີ 12-21 ກໍລະກົດ 2017 ຢູ່ທີ່ ປະເທດສະຫະລັດອາເມຣິກາ.

ໃນການນຳສະເໜີດັ່ງກ່າວປະກອບມີ 4 ຫົວຂໍ້ຫຼັກຄື: 1) ຜົນກະທົບດ້ານບວກ ແລະ ລົບຈາກການລົງທຶນດ້ານກະສິກຳ; **2)** ກອບນິຕິກຳ ແລະ ບັນດາກົດລະບຽບພາຍໃນປະເທດ; **3)** ການລົງທຶນດ້ານກະສິກຳຕາມແນວທາງການເຄົາລົບສິດທິ; ແລະ **4)** ກົນໄກ ແລະ ມາດຕະການສາກົນກ່ຽວກັບການລົງທຶນດ້ານດ້ານກະສິກຳ.

ໃນຊ່ວງການສົນທະນາ ບັນດາສະມາຊິກໄດ້ປະກອບຄຳຄິດເຫັນກ່ຽວກັບ ຄວາມທ້າທາຍໃນການກ້າວໄປເຖິງ ການລົງທຶນດ້ານກະສິກຳທີ່ມີຄວາມຮັບຜິດຊອບອັນແທ້ຈິງຢູ່ໃນລາວເພາະວ່າຈາກບົດຮຽນຜ່ານມາ ແມ່ຍັງປະກົດມີບັນຫາຄົງຄ້າງຫຼາຍບັນຫາ ເຊັ່ນວ່າ ການປະຕິບັດກົດໝາຍທີ່ບໍ່ໄດ້ ປະສິດທິຜົນ, ຍັງມີຊ່ອງວ່າງຫຼາຍໃນການສື່ສານກັນລະຫວ່າງ ພາກເອກະຊົນ ແລະ ຊຸມຊົນ ແລະ ອື່ນໆ, ການຂາດພື້ນທີ່ສຳລັບ ອົງການຈັດຕັ້ງພາກປະຊາສັງຄົມໃນລາວໃນການໂຄສະໜາສົ່ງເສີມ ການລົງທຶນທີ່ມີຄວາມຍືນຍົງ ແມ່ນປະເດັນໜຶ່ງທີ່ມີການສົນທະນາກັນ ເຊິ່ງບັນຫາດັ່ງກ່າວ ແມ່ນເອື້ອຍໃນເກີດມີການ ສ້າງຜົນກະທົບທາງດ້ານລົບຫຼາຍຂຶ້ນ ແລະ ເປັນສິ່ງກີດຂວາງໃນການດຳເນີນງານດັ່ງກ່າວ.

## ໂຄງການ ຫຼຸດການປ່ອຍອາຍກາສເຮືອນແກ້ວ ແຫ່ງປະເທດລາວ (ER Program)

ທາງ ອົງການອາຫານ ແລະ ການກະເສດ ແຫ່ງສະຫະປະຊາຊາດ (UNFAO) ໄດ້ເຊີນໃຫ້ ກຸ່ມແລກປ່ຽນຂໍ້ມູນຂ່າວສານ (LIWG) ເຂົ້າຮ່ວມ ໂຄງການ ຫຼຸດການປ່ອຍອາຍກາສເຮືອນແກ້ວ ແຫ່ງປະເທດລາວ (ER Program) ພາຍໃຕ້ການສະໜັບສະໜູນກອງທຶນຈາກ ຄາບອນ (Carbon Fund) ຂອງ ໂຄງການຄວາມຮ່ວມມືດ້ານການອະນຸລັກຊັບພະຍາກອນປ່າໄມ້ (FCPF). ໃນວັນທີ 22 ພະຈິກ 2017 ທາງ *DOF REDD+ແລະ* FCPF ຮ່ວມກັບ LIWG ໃນການຈັດ ກອງປະຊຸມປຶກສາຫາລືກັບບັນດາໂຄງການຕ່າງໆກ່ຽວກັບທີ່ດິນເພື່ອ ເປັນການປະເມີນກ່ຽວກັບ ການຄອບຄອງຊັບພະຍາກອນທຳມະຊາດ ແລະ ທີ່ດິນ ຢູ່ພະແນກປ່າໄມ້. ກອງປະຊຸມດັ່ງກ່າວແມ່ນຈັດຂຶ້ນເພື່ອເປັນການ ຮັບຟັງຄຳຄິດເຫັນ ກັບໜ່ວຍງານອົງການຈັດຕັ້ງທາງສັງຄົມລາວ ແລະ ອົງການອື່ນໆທີ່ເຮັດວຽກກ່ຽວກັບທີ່ດິນ ແລະ ເພື່ອເປັນຈຸເລີ່ມຕົ້ນ ສຳລັບ ໂຄງການ REDD+/ ກອງທຶນຄາບອນຂອງ FCPF (ER-P) ແຫ່ງປະເທດລາວ. ຜົນໄດ້ຮັບຈາກກອງປະຊຸມດັ່ງກ່າວຈະໄດ້ສັງລວມສ້າງເປັນໂຄງຮ່າງແບບຕາຕະລາງ (matrix) ຂອງ ຮູບແບບ, ການຂະຫຍາຍຕົວ, ກອບນິຕິກຳ ແລະ ກົດລະບຽບຕ່າງໆທີ່ມີຢູ່ກ່ຽວກັບ ການຄອບຄອງທີ່ດິນ ແລະ ຊັບພະຍາກອນ ຢູ່ໃນ ສປປ ລາວ ແລະ ຂໍ້ມູນດັ່ງກ່າວແມ່ນ ຈະຖືກສ້າງເປັນເອກະສານພາຍໃຕ້ໂຄງການ ER ເຊິ່ງຈະມີກຳນົດສົ່ງໃນທ້າຍເດືອນ ມັງກອນ, 2018.

## ກອງປະຊຸມແລກປ່ຽນ ກ່ຽວກັບບົດລາຍງານ ການຫັນປ່ຽນທີ່ດິນເປັນທຶນ

ໃນວັນທີ 23 ພະຈິກ 2017 ທາງ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ໄດ້ຈັດກອງປະຊຸມ ແລກປ່ຽນ ເພື່ອນໍາສະເໜີກ່ຽວກັບຜົນໄດ້ຮັບຈາກການສຶກສາ "ການຫັນປ່ຽນທີ່ດິນເປັນທຶນ: ການປະເມີນການປະຕິບັດນະໂຍບາຍຫັນປ່ຽນທີ່ດິນເປັນທຶນ ບອກ 10 ປີ" ເພື່ອເປັນການຮັບຟັງຂໍ້ຄິດເຫັນ ແລະ ຂໍ້ສະເໜີແນະ ຈາກບັນດາສະມາຊິກ LIWG ແລະ ຜູ້ຮ່ວມງານອື່ນໆ. ການນໍາສະເໜີດັ່ງກ່າວ ແມ່ນດໍາສະເໜີໂດຍ ທ່ານ ໄມລ໌ ເຄນນີ-ລາຊາຣ໌ ຈາກມະຫາວິທະຍາໄລກຽວໂຕ ເຊິ່ງເປັນຜູ້ສຶກສາຫົວຂໍ້ດັ່ງກ່າວຮ່ວມກັບ ນັກຄົ້ນຄວ້າອີກສອງທ່ານ.

ຜົນຈາກການສຶກສາຊີ້ໃຫ້ເຫັນເຖິງ ການໃຫ້ຄວາມໝາຍທີ່ແຕກຕ່າງກັນກ່ຽວກັບການຫັນປ່ຽນທີ່ດິນເປັນທຶນໃນໄລຍະປັດຈຸບັນ ເຊິ່ງອີງໃສ່ຄວາມເຂົ້າໃຈຂອງແຕ່ລະຄົນ ແລະ ຄວາມຈິງທີ່ວ່າ ນະໂຍບາຍດັ່ງກ່າວແມ່ນມີຄວາມເຂົ້າໃຈທີ່ແຕກຕ່າງກັນ ແລະ ນໍາເປັນສູ່ຄວາມແຕກຕ່າງຂອງ ຮູບແບບຕ່າງໆ ທີ່ກ່ຽວຂ້ອງກັບນະໂຍບາຍນີ້ (ເຊັ່ນວ່າ: ການຊື້-ຂາຍທີ່ດິນສໍາລັບໂຄງລ່າງພື້ນຖານ, ສະພາບການເງິນທີ່ດິນຂອງໂຄງລ່າງພື້ນຖານ, ການເຊົ່າ ແລະ ການສໍາປະທານທີ່ດິນລັດ, ການເຮັດໃບຕາດິນ ແລະ ການສ້າງຕະຫຼາດທີ່ດິນ).

ໃນກອງປະຊຸມດັ່ງກ່າວ ບັນດາຜູ້ເຂົ້າຮ່ວມໄດ້ມີການແລກປ່ຽນກັບຜູ້ນໍາສະເໜີທີ່ຢ່າງນ່າສົນໃຈ ໂດຍສະເພາະແມ່ນການສະແດງຄວາມເຫັນວ່າ ນະໂຍບາຍການຫັນປ່ຽນທີ່ດິນເປັນທຶນນັ້ນ ດີແຕ່ໃນທາງທິດສະດີ ແຕ່ບໍ່ມີປະສິດ ທິພາບໃນທາງປະຕິບັດແທ້ບໍ? ຫຼື ຂາດປະສິດພິພາບທັງ ທາງທິດສະດີ ແລະ ພາກປະຕິບັດ?.

ສໍາລັບ ບົດລາຍງານສະບັບເຕັມແມ່ນຈະມີການນໍາສະເໜີໃນໄວໆນີ້.




ປ້າຍປະກາດຂາຍດິນຢູ່ຖະໜົນ 450 ປີ

## ງານເປີດໂຕປະຕິທິນກົດໝາຍປີ 2018




ພາບໜ້າປົກປະຕິທິນກົດໝາຍປີ 2018

ຫຼັງຈາກການເຮັດວຽກຮ່ວມກັນຂອງທີມງານສ້າງປະຕິທິນເປັນໄລຍະຍາວນານ ໃນຊ່ວງປີ 2018, ໃນທີ່ສຸດງານເປີດໂຕປະຕິທິນປະຈໍາປີ 2018 ກໍ່ໄດ້ຈັດຂຶ້ນໃນວັນທີ 19 ທັນວາ 2017. ປະຕິທິນສະບັບນີ້ຖືວ່າເປັນສະບັບທີ 9 ເຊິ່ງມີການເລີ່ມພັດທະນາປະຕິທິນກົດໝາຍຕັ້ງແຕ່ປີ 2010 ເປັນຕົ້ນມາ.

ງານເປີດໂຕປະຕິທິນປີນີ້ ແມ່ນຂຶ້ນກ່າວພິທີໂດຍທ່ານນາງ ເຊແລດສະຕິນ ໂກຣແຊວ ຜູ້ອໍານວຍການ ອົງການເຮວວິຕັດປະຈໍາລາວ ແລະ ປະທານຄະນະບໍລິຫານງານ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG). ສ່ວນພາກເນື້ອໃນຂອງປະຕິທິນກົດໝາຍປີ 2018 ແມ່ນນໍາສະເໜີໂດຍ ທີມງານພັດທະນາປະຕິທິນກົດໝາຍປີ 2018.

ນອກນັ້ນ ທາງທີມງານໄດ້ເຊີນບັນດາສະມາຊິກຂອງ LIWG ໃນການນໍາສະເໜີແລກປ່ຽນ ບົດຮຽນການນໍາໃຊ້ປະຕິທິນກົດໝາຍ ເປັນເຄື່ອງມືໃນການເຜີຍແຜ່ກົດໝາຍ, ນະໂຍບາຍ ແລະ ບັນດາກົດລະບຽບຕ່າງໆທີ່ກ່ຽວຂ້ອງກັບທີ່ດິນ, ຊັບພະຍາກອນທໍາມະຊາດ, ບົດບາດຍິງ-ຊາຍ ທີ່ຕິດພັນກັບຊຸມຊົນ.

ພ້ອມນັ້ນ ຍັງມີມີການຈັດງານວາງສະແດງປະຕິທິນກົດໝາຍຕັ້ງແຕ່ສະບັບປີ 2010 ເຖິງ ສະບັບປັດຈຸບັນ ປີ 2018.

ໃນນັ້ນບັນດາຜູ້ເຂົ້າຮ່ວມຫຼາຍທ່ານກໍ່ໄດ້ມີການເນັ້ນເຖິງຄວາມສໍາຄັນ ແລະ ຄຸນປະໂຫຍດຂອງການໃຊ້ປະຕິທິນກົດໝາຍດັ່ງກ່າວໃນການເຜີຍແຜ່ໂຄສະໜາຄວາມຮູ້ທາງດ້ານກົດໝາຍແກ່ຊຸມຊົນໃນປະເທດລາວ.

ໃນງານດັ່ງກ່າວ ໄດ້ມີຫຼາຍພາກສ່ວນເຂົ້າຮ່ວມເຊັ່ນ: ພາກລັດ, ນັກຄົ້ນຄວ້າ, ນັກສຶກສາຈາກມະຫາໄລ, ອົງການຈັດຕັ້ງທາງສັງຄົມລາວ ແລະ ອົງການຈັດຕັ້ງສາກົນ, ແລະ ບັນດານັກສື່ຂ່າວຈາກຫຼາຍພາກສ່ວນກໍ່ໄດ້ເຂົ້າຮ່ວມ.

*ທ່ານສາມາດເບິ່ງປະຕິທິນປະຈໍາປີ 2018 ໄດ້ທີ່ນີ້ ແລະ ຂ່າວກ່ຽວກັບງານດັ່ງກ່າວໄດ້ທີ່ນີ້.*

# ກຸ່ມເຮັດວຽກສະເພາະ/ໜ່ວຍງານວິຊາການ

## ກຸ່ມທີ່ປຶກສາ ກ່ຽວກັບການປັບປຸງກົດໝາຍທີ່ດິນ

ກຸ່ມທີ່ປຶກສາ ສະເພາະກົດໝາຍທີ່ດິນ ມີການພົບປະກັນເປັນປະຈໍາ ເພື່ອແຈ້ງສະຖານະການລ່າສຸດ ແລະ ປຶກສາຫາລືກ່ຽວກັບຂະບວນການປັບປຸງກົດໝາຍທີ່ດິນ. ກຸ່ມນີ້ ແມ່ນເຮັດວຽກຢ່າງໃກ້ຊິດກັບກອງເລຂາຂອງຄະນະກໍາມະທິການປັບປຸງກົດໝາຍທີ່ດິນ ເພື່ອກໍານົດຄໍາແນະນໍາຕ່າງໆ ແລ້ວນໍາເອົາຄໍາແນະນໍານັ້ນສົ່ງໃຫ້ແກ່ກອງເລຂາການປັບປຸງກົດໝາຍທີ່ດິນ ພິຈາລະນາ.

ໃນປັດຈຸບັນ ການປັບປຸງກົດໝາຍທີ່ດິນ ແມ່ນຍັງຢູ່ຂະບວນການການປຶກສາຫາລືລະຫວ່າງຄະນະກໍາມະທິການປັບປຸງກົດໝາຍທີ່ດິນ. ເຊິ່ງອີງໃສ່ແຫຼ່ງຂໍ້ມູນ ແຈ້ງວ່າ ໃນຕອນທໍາອິດແມ່ນລະບຸວ່າ ກົດໝາຍຈະຜ່ານສະພາແຫ່ງຊາດລາວໃນລະຫວ່າງ ເດືອນມີນາ-ເມສາ, 2018 ແຕ່ຂ່າວລ່າສຸດລະບຸວ່າ ການພິຈາລະນາກົດໝາຍປັບປຸງສະບັບນີ້ແມ່ນຖືກຍ້າຍໄປເປັນທ້າຍປີ 2018.

## ຂະແໜງການຍ່ອຍກ່ຽວກັບທີ່ດິນ

ກຸ່ມເຮັດວຽກສະເພາະຂະແໜງການທີ່ດິນ ໄດ້ຈັດກອງປະຊຸມຂຶ້ນໃນວັນທີ 27 ຕຸລາ 2017 ຢູ່ກະຊວງຊັບພະຍາກອນທາມະຊາດ ແລະ ສິ່ງແວດລ້ອມ ເຊິ່ງ ທ່ານ ວົງເດືອນ ວົງສີຫາລາດ, ຫົວໜ້າກົມຄຸ້ມຄອງ-ບໍລິຫານທີ່ດິນ ແລະ ເປັນປະທານ ກຸ່ມເຮັດວຽກຂະແໜ່ງການຍ່ອຍກ່ຽວກັບທີ່ດິນ ໄດ້ເຂົ້າຮ່ວມກອງປະຊຸມພ້ອມກັບທ່ານນາງ ເຊເລສຕິນ ໂຄແຊລ ເຊິ່ງເປັນປະທານ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ແລະ ເປັນປະທານຮ່ວມກັບ ກຸ່ມເຮັດວຽກຂະແໜ່ງການຍ່ອຍກ່ຽວກັບທີ່ດິນ ເຂົ້າຮ່ວມປະຊຸມ. ໃນໂອກາດດັ່ງກ່າວ ທ່ານວົງເດືອນ ວົງສີຫາລາດ ໄດ້ລວບລວມກ່ຽວກັບຂໍ້ນໍາສະເໜີແນະຫຼັກກ່ຽວກັບປະເດັນທີ່ດິນ ຈາກຫຼາຍໜ່ວຍງານທີ່ຢູ່ພາຍໃຕ້ ຂະແໜ່ງການຍ່ອຍກ່ຽວກັບທີ່ດິນຢູ່ໃນກອງປະຊຸມດັ່ງກ່າວດ້ວຍ.

*ທ່ານສາມາດສຶກສາຂໍ້ມູນລາຍລະອຽດກ່ຽວກັບຄໍາແນະນໍາຫຼັກກ່ຽວກັບປະເດັນທີ່ດິນໃນລາວໄດ້ ທີ່ນີ້.*

## ກຸ່ມເຮັດວຽກເພື່ອຜັກດັນການເຮັດວຽກຮ່ວມມືກັບພາກສ່ວນເອກະຊົນ




ໃນໄຕມາດນີ້ ທາງກຸ່ມໄດ້ສືບຕໍ່ເຮັດວຽກກ່ຽວກັບ ພັນທະດ້ວຍຄວາມສະໝັກໃຈສໍາລັບທຸລະກິດກະສິກໍາທີ່ມີຄວາມຮັບຜິດຊອບໃນ ສປປ ລາວ (VCRA) ແລະ ໄດ້ສະຫຼຸບກ່ຽວກັບກອບການຕິດຕາມການປະຕິບັດພັນທະດັ່ງກ່າວ. ທາງ LIWG ກໍ່ຍັງພະຍາຍາມຊອກຫາໜ່ວຍງານຕ່າງໆ ເພື່ອຮອງຮັບເອົາ ພັນທະດັ່ງກ່າວນີ້. ໃນມໍ່ໆມານີ້ ທາງສະຫະພັນການຄ້າຂອງສະຫະພາບເອີຣົບ ໄດ້ຮັບຮອງເອົາ ພັນທະດັ່ງກ່າວ ພ້ອມທັງຍັງໄດ້ຮັບການສະແດງຄວາມຍິນດີຈາກ ກຸ່ມ ອິນເຕີລາເກັນ.

*ສຶກສາເພີ່ມເຕີມກ່ຽວກັບພັນທະດັ່ງກ່າວໄດ້ທີ່ນີ້.*

# ກິດຈະກໍາຂອງສະມາຊິກ/ການລິເລີ່ມ/ ແລະ ຄູ່ຮ່ວມງານ ຂອງ LIWG

## ໂຄງການພັດທະນາລະບົບນິເວດຊີວະນາໆພັນກະສິກໍາຢູ່ເຂດພູດອຍ

ລະບົບແລກປ່ຽນຄວາມຮູ້ດ້ານຊີວະນາໆພັນກະສິກໍາ (ABD) ຫຼື ຮູ້ອີກຊື່ໜຶ່ງວ່າ **"ພາເຂົ້າລາວ"** ເຊິ່ງເປັນລະບົບລວບລວມແຫຼ່ງຂໍ້ມູນຂ່າວສານ ກ່ຽວກັບຊີວະນາໆພັນກະສິກໍາ ເຊິ່ງມີຈຸດປະສົງເພື່ອສັງລວມ ເອົາບັນດາເອກະສານ, ການບອກເລົ່າເລື່ອງລາວ ແລະ ພູມປັນຍາທ້ອງຖິ່ນທີ່ຢູ່ໃນຂອບເຂດທົ່ວປະເທດ ເພື່ອສົ່ງເສີມການນໍາໃຊ້ ແລະ ການເຂົ້າເຖິງຂໍ້ມູນດັ່ງກ່າວນັ້ນສະດວກສະບາຍຂຶ້ນ ໂດຍສະເພາະສໍາລັບ ນັກຮຽນ, ນັກຄົ້ນຄວ້າ, ຜູ້ຊ່ຽວຊານສະເພາະດ້ານ, ນັກພັດທະນາຊຸມຊົນ, ຜູ້ກໍານົດນະໂຍບາຍ, ອົງການຈັດຕັ້ງ ແລະ ຊຸມຊົນ ໃນຂັ້ນທ້ອງຖິ່ນ ແລະ ບັນດາພາກສ່ວນເອກະຊົນຕ່າງໆທີ່ກ່ຽວຂ້ອງ.

ລະບົບ ພາເຂົ້າລາວ ປະກອບດ້ວຍ 3 ລະບົບຍ່ອຍທີ່ມີຄວາມເຊື່ອມຕໍ່ກັນເຊັ່ນ: ແຫຼ່ງຄວາມຮູ້, ການເລົ່າເລື່ອງ ແລະ ການມີສ່ວນຮ່ວມ.

ລະບົບດັ່ງກ່າວຈະມີການເປີດນໍາໃຊ້ປະມານກາງປີ 2018. ການສະໜອງຂໍ້ມູນໃນເບື້ອງຕົ້ນ ລະບົບຈະສັງລວມຂໍ້ມູນ ຂອງເຄື່ອງປ່າຂອງດົງ ຈໍານວນ 100 ຊະນິດ ທີ່ມີຄວາມສໍາຄັນທີ່ສຸດຕໍ່ເສດຖະກິດ ແລະ ສະໜອງຂໍ້ມູນລະອຽດກ່ຽວກັບຈໍານວນຊະນິດພັນ ແລະ ຜະລິດຕະພັນທີ່ສໍາຄັນ.

ໃນມໍ່ໆນີ້ LIWG ໄດ້ເຂົ້າຮ່ວມໂຄງການລິເລີ່ມນີ້ ເຊິ່ງຈະຊ່ວຍໃຫ້ສາມາດແບ່ງປັນຄວາມຮູ້ລະຫວ່າງ ລະບົບນີ້ ແລະ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ.

## ອົງການບ້ານຈຸດສຸມສາກົນ (VFI)

ກອງປະຊຸມ *"ການລົງທຶນທີ່ມີຄວາມຮັບຜິດຊອບຂອງບໍລິສັດ: ບໍລິສັດສາມາດດໍາເນີນທຸລະກິດໄດ້ດ້ວຍດີບໍ ເມື່ອມີການດໍາເນີນທຸລະກິດຢ່າງມີຄວາມຮັບຜິດຊອບ? "* ໄດ້ຈັດຂຶ້ນໂດຍ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ (ສຄອຊ) ແລະ ເຄືອຂ່າຍ ຄວາມຮັບຜິດຊອບຕໍ່ສັງຄົມ ແຫ່ງອາຊຽນ (ACN) ໃນວັນທີ 17 ທັນວາ 2017 ໃນນະຄອນຫຼວງວຽງຈັນ, ລາວ. ຈຸດປະສົງຂອງກອງປະຊຸມດັ່ງກ່າວແມ່ນເພື່ອ ປຶກສາຫາລືກ່ຽວກັບ ການເຕີບໂຕ ທາງດ້ານທຸລະກິດໃນປັດຈຸບັນ ທີ່ເຫັນວ່າ ບັນດາບໍລິສັດໃນທົ່ວໂລກ ກໍາລັງຊອກຫາຊ່ອງທາງການເຮັດທຸລະກິດທີ່ບໍ່ໄດ້ເນັ້ນແຕ່ຜົນຜະລິດທາງດ້ານທຸລະກິດ ແລະ ການອຸປະຖໍາເທົ່ານັ້ນ ແຕ່ເປັນ ການດໍາເນີນທຸລະກິດທີ່ຄໍານຶງເຖິງວ່າ ທຸລະກິດທີ່ຕົນດໍາເນີນຢູ່ນັ້ນແມ່ນມີຜົນກະທົບຕໍ່ກັບຊຸມຊົນ ແລະ ສິ່ງແວດລ້ອມຄືແນວໃດ.

ຢູ່ໃນຊ່ວງການສົນທະນາຕ່າງໆ ໄດ້ມີ ການໂອລົ້ມຖອດຖອນບົດຮຽນກ່ຽວກັບປະເດັນເດັ່ນໆທີ່ເກີດຂຶ້ນໃນປະເທດລາວ ໂດຍສະເພາະແມ່ນເລື່ອງການບັງຄັບແຮງງານ, ການຄ້າມະນຸດ ແລະ ຄວາມຂັດແຍ້ງດ້ານທີ່ດິນ.

ໃນກອງປະຊຸມດັ່ງກ່າວ ທ່ານ ນາງອະນິດາ ຄວງວິຈິດ, ຜູ້ປະສານງານດ້ານນະໂຍບາຍ ຈາກອົງການບ້ານຈຸດສຸມສາກົນ (VFI) ກໍ່ໄດ້ມີການນໍາສະເໜີແລກປ່ຽນກ່ຽວກັບປະເດັນທີ່ດິນໃນປະເທດລາວ. ການນໍາສະເໜີຄັ້ງນີ້ ແມ່ນເນັ້ນກ່ຽວກັບວິທີການປ້ອງກັນເພື່ອບໍ່ໃຫ້ເກີດມີຄວາມຂັດແຍ້ງທາງດ້ານທີ່ດິນເກີດຂຶ້ນໃນຊຸມຊົນ ແລະ ຮັບປະກັນໃຫ້ມີລະບົບການຮ້ອງທຸກຢ່າງມີປະສິດທິພາບ ແກ່ຊຸມຊົນທີ່ໄດ້ຮັບຜົນກະທົບ ໂດຍກິດຈະກໍາທາງດ້ານການລົງທຶນດໍາເນີນທຸລະກິດ.

## ໂຄງການຄຸ້ມຄອງທີ່ດິນໃນພາກພື້ນແມ່ນໍ້າຂອງ (MRLG)

ກອງປະຊຸມຝຶກອົບຮົມລະດັບພາກພື້ນກ່ຽວກັບ "ຄວາມຮັບຜິດຊອບຂອງການລົງທຶນທຸລະກິດກະສິກໍາຂະໜາດໃຫຍ່ ໃນພາກພື້ນແມ່ນໍ້າຂອງ" ໃນລະຫວ່າງວັນທີ 15-17 ພະຈິກ 2017.

ກອງປະຊຸມແມ່ນປະກອບມີ ສອງຈຸດປະສົງຄື: 1) ເພື່ອສຶກສາກ່ຽວກັບສິ່ງທ້າທາຍໃນດ້ານການລົງທຶນທຸລະກິດຂະໜາດໃຫຍ່; 2) ເພື່ອກໍານົດຊ່ອງທາງໃນການປັບປຸງສິ່ງທີ່ບໍ່ເອື້ອອໍານວຍ ແລະ ສະໜັບສະໜູນການພັດທະນາແບບຍືນຍົງ ເພື່ອພ້ອມກັບການຂະຫຍາຍໂຕທາງດ້ານເສດຖະກິດ.

ຢູ່ໃນກອງປະຊຸມ ຍັງໄດ້ກໍານົດຄໍາແນະນໍາສໍາລັບທາງເລືອກແກ່ການພັດທະນາ ແລະ ລົງທຶນ ທຸລະກິດກະສິກໍາ ແລະ ການມີສ່ວນຮ່ວມຂອງຊາວກະສິກອນຂະໜາດນ້ອຍ.

ກອງປະຊຸມດັ່ງກ່າວ ມີຜູ້ເຂົ້າຮ່ວມເຖິງ 100 ຄົນ ຈາກໜ່ວຍງານພາກລັດ, ເອກະຊົນ, ສະຖາບັນຄົ້ນຄວ້າການສຶກສາ ແລະ ອົງການຈັດຕັ້ງທາງສັງຄົມ ໃນພາກພື້ນແມ່ນໍ້າຂອງເຊິ່ງລວມທັງຈີນ ແລະ ອົງການຈັດຕັ້ງທາງສັງຄົມ ແລະ ຄູ່ຮ່ວມງານ.

ສໍາລັບການຈັດງານໃນຄັ້ງນີ້ ແມ່ນຮ່ວມຈັດໂດຍ ພະແນກການສົ່ງເສີມ ການລົງທຶນ, ກະຊວງແຜນການແລະການລົທຶນ ແລະ ໂຄງການຄຸ້ມຄອງທີ່ດິນໃນພາກພື້ນ ພ້ອມດ້ວຍ ອ໋ອກຟາມ ແລະ ສະຖາບັນ ກ່ຽວກັບນະໂຍບາຍ ແລະ ຍຸດທະສາດ, ແລະ ການຄົ້ນຄວ້າ ແລະ ການພັດທະນາ ກະສິກໍາ, ຫວຽດນາມ (IPSARD).

## ສູນແຫ່ງການຮຽນຮູ້ ແລະ ແລກປ່ຽນຂໍ້ມູນທີ່ດິນ (LILC)

ສູນຂໍ້ມູນຂ່າວສານກ່ຽວກັບທີ່ດິນໃນລາວ ເປັນໂຄງການໃໝ່ ສໍາລັບ ບັນດາສະມາຊິກຂອງ LIWG. ຈຸດປະສົງອັນລວມຂອງການສ້າງສູນນີ້ຂຶ້ນມາແມ່ນ:

- ສະໜັບສະໜູນ ແລະ ອໍານວຍຄວາມສະດວກແກ່ບັນດາອົງການຈັດຕັ້ງທາງສັງຄົມລາວ ແລະ ຄູ່ຮ່ວມພັດທະນາ ເພື່ອເຮັດວຽກຮ່ວມກັນ ແລະ ສົນທະນາແລກປ່ຽນກ່ຽວກັບປະເດັນທີ່ດິນໃນ ປະເທດລາວ
- ເພື່ອສະໜອງພື້ນທີ່ທາງກາຍະພາບ ແລະ ທາງອອນລາຍ ແກ່ບັນດາສະມາຊິກຂອງ LIWG ໃນການແລກປ່ຽນບົດຮຽນ, ຄວາມຮູ້ ແລະ ປະສົບການຕ່າງໆຂອງການເຮັດວຽກກ່ຽວກັບທີ່ດິນ

ໃນມໍ່ໆນີ້ ໃນສ່ວນຂອງ ພື້ນທີ່ອອນລາຍ ແມ່ນຈະໄດ້ເປີດໂອກາດແກ່ບັນດາສະມາຊິກ ໃນການເຊື່ອມຕໍ່ Open Development Mekong ເພື່ອເຂົ້າເຖິງແຫຼ່ງຂໍ້ມູນ ກ່ຽວກັບແນວທາງການພັດທະນາຢູ່ໃນບັນດາປະເທດຕ່າງໆຂອງພາກພື້ນແມ່ນໍ້າຂອງ ໂດຍສະເພາະແມ່ນການເຂົ້າເຖິງແຫຼ່ງຂໍ້ມູນຂອງ Open development Laosເຊິ່ງເປັນຊ່ອງທາງໃຫ້ຄົນລາວ ແລະ ອົງການຈັດຕັ້ງສັງຄົມລາວສາມາດເຂົ້າເຖິງແຫຼ່ງຂໍ້ມູນກ່ຽວກັບປະເດັນທີ່ດິນ ແລະ ຊັບພະຍາກອນທໍາມະຊາດໃນປະເທດລາວ ທີ່ເປັນທັງພາສາລາວ ແລະ ພາສາອັງກິດ.

ໂຄງການນີ້ແມ່ນກໍາລັງຢູ່ໃນຊ່ວງການເລີ່ມຈັດຕັ້ງປະຕິບັດ ເຊິ່ງໃນໄຕມາດໜ້າ ແມ່ນຈະມີການນໍາສະເໜີ ກ່ຽວກັບບັນດາກິດຈະກໍາຕ່າງໆທີ່ທາງສູນຈະຈັດຂຶ້ນ ແລະ ການເປີດໂອກາດໃຫ້ບັນດາສະມາຊິກ LIWG ແລະ ສາທາລະນະໃນການຈັດກິດຈະກໍາໃນສູນ ເຊິ່ງຈະມີຂຶ້ນໃນໄວໆນີ້.

## ໂຄງການ LIFE



ເຄື່ອງມືທີ່ທາງທີມງານ LIFE ໃຊ້ໃນການຝຶກອົບຮົມ

ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນເພື່ອເພີ່ມຄວາໝັ້ນຄົງທາງດ້ານສະບຽງອາຫານ (LIFE) ແມ່ນເປັນໂຄງການໜຶ່ງພາຍໃຕ້ LIWG ໄດ້ມີການຈັດ ກອງປະຊຸມກ່ຽວກັບ ຊຸມຊົນແຫ່ງການຮຽນຮູ້ ແລະ ແລກປ່ຽນ ທີ່ໄດ້ຈັດຂຶ້ນ ໃນວັນທີ 8 ພະຈິກ 2017 ໃນເຮືອນຮຽນຮູ້, ນະຄອນຫຼວງວຽງຈັນ.

ກອງປະຊຸມດັ່ງກ່າວຈັດຂຶ້ນໂດຍມີຈຸດປະສົງເພື່ອ: ແລກປ່ຽນປະສົບການ, ບົດຮຽນ ແລະ ຜົນໄດ້ຮັບຂອງການຈັດຝຶກອົບຮົມຂອງທີມງານ; ເພື່ອຊີ້ໃຫ້ເຫັນເຖິງຊ່ອງວ່າງໃນການສ້າງຄວາມອາດສາມາດ ແລະ ຄວາມຕ້ອງການ; ເພື່ອພິຈາລະນາບັນດາບູລິມາສິດຂອງ ໂຄງການ LIFE ແລະ ຄູ່ຮ່ວມງານໃນການສືບຕໍ່ວຽກງານຕໍ່ໄປ. ໃນກອງປະຊຸມດັ່ງກ່າວ ເຂົ້າຮ່ວມໂດຍບັນດາຄູ່ຮ່ວມງານຂອງ LIFE.

ໃນກອງປະຊຸມດັ່ງກ່າວ, ທີມງານ LIFE ໄດ້ນຳສະເໜີກ່ຽວກັບບັນດາເຄື່ອງມື ທີ່ໄດ້ນຳໃຊ້ໃນການຈັດຝຶກອົບຮົມໃຫ້ແກ່ຄູ່ຮ່ວມງານ ເຊິ່ງປະກອບມີ ບັນດາໂພສເຕີ, ວິດີໂອ ແລະ ບັນດາເກມຕ່າງໆ. ນອກນັ້ນຍັງມີການນຳສະເໜີກ່ຽວກັບວິທີການຕ່າງໆທີ່ນຳໃຊ້ເຂົ້າໃນການອະທິບາຍບັນດາຫົວຂໍ້ຕ່າງໆ ໂດຍສະເພາະກ່ຽວກັບປະເດັນທີ່ດິນ ແລະ ສັນຍາກະສິກຳ.

ນອກນັ້ນ ຍັງມີການນຳສະເໜີກ່ຽວກັບ ກໍລະນີສຶກສາ ເຊິ່ງໃນໂອກາດດັ່ງກ່າວ ທາງທີມງານ LIFE ໄດ້ເຊີນບັນດາຄູ່ຮ່ວມງານໃຫ້ນຳສະເໜ ແລະ ແລກປ່ຽນ ກ່ຽວກັບປະສົບການ ໂດຍສະເພາະແມ່ນຜົນໄດ້ຮັບກໍລະນີສຶກສາ ທີ່ກ່ຽວຂ້ອງກັບປະເດັນທີ່ດິນ ແລະ ສັນຍາກະສິກຳ. ຈາກການນຳສະເໜີ ບັນດາຜູ້ເຂົ້າຮ່ວມເຫັນວ່າວິທີການຕ່າງໆທີ່ຖືກສ້າງຂຶ້ນ ແລະ ນຳໃຊ້ ຂອງທີມ LIFE ແມ່ນມີແນວຄຶດສ້າງສັນ ແລະ ເປັນປະໂຫຍດຫຼາຍ ໂດຍສະເພາະແມ່ນການສ້າງຄວາມສົນໃຈແກ່ຜູ້ເຂົ້າຮ່ວມໃນການຝຶກອົບຮົມ.

# ຂ່າວເດັ່ນໃນໄຕມາດກ່ຽວກັບປະເດັນທີ່ດິນໃນລາວ

## ກອງປະຊຸມໂຕະມົນປະຈຳປີ 2017

ກອງປະຊຸມໂຕະມົນປະຈຳປີ 2017 ໄດ້ຈັດຂຶ້ນ ໃນລະຫວ່າງວັນທີ 22-23 ພະຈິກ ພາຍໃຕ້ຫົວຂໍ້ *"ການເປັນຄູ່ຮ່ວມໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດລາວ 5 ປີ ຄັ້ງທີ VIII ເພື່ອບັນລຸເປົ້າໝາຍໃນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ເປົ້າໝາຍການພັດທະນາແບບຍືນຍົງ".*

ໃນກອງປະຊຸມໄດ້ກຳນົດເອົາ 4 ຫົວຂໍ້ສຳລັບການປຶກສາຫາລືຄື: 1) ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ແລະ ການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ (ປພຍ); 2)ການລົງທຶນທີ່ມີຄຸນນະພາບຂອງເອກະຊົນ ສຳລັບການພັດທະນາ; 3)ການລົງທຶນໃສ່ພັດທະນາສີມືແຮງງານເຊິ່ງເປັນອົງປະກອບສຳຄັນໃນການພັດທະນາມະນຸດ; 4)ການເພີ່ມທະວີການຮ່ວມມືແບບໃຕ້-ໃຕ້ ແລະ ການຮ່ວມມືແບບສາມຫຼ່ຽມ.

ສຳລັບປະເດັນການຄຸ້ມຄອງທີ່ດິນ ແມ່ນໄດ້ຖືກນຳສະເໜີຢູ່ໃນກອງປະຊຸມເຊັ່ນດຽວກັນ ເຊິ່ງຢູ່ໃນ ບົດສະຫຼຸບກອງປະຊຸມ ໄດ້ລະບຸວ່າ ລັດຖະບານຊຸດນີ້ໄດ້ຮັບການຍົກຍ່ອງກ່ຽວກັບວຽກງານຄວາມຄືບໜ້າ ຂອງການປັບປຸງກົດໝາຍທີ່ດິນ ເຊິ່ງເປັນການສະແດງໃຫ້ເຫັນເຖິງ ການເພີ່ມຂຶ້ນຂອງປະສິດທິພາບໃນການຄຸ້ມຄອງ, ການຄອບຄອງ, ຄວາມໝັ້ນຄົງ ກ່ຽວກັບທີ່ດິນ ແລະ ການຊົດເຊີຍ. ສິ່ງດັ່ງກ່າວນັ້ນເປັນພື້ນຖານໃນການຊ່ວຍເນັ້ນຢ້ຳເຖິງ ຄວາມສຳຄັນຂອງທີ່ດິນເປັນຊັບສິນ ໂດຍສະເພາະແມ່ນສຳລັບຜູ້ທຸກຍາກ.

## ການຄຸ້ມຄອງທີ່ດິນຍັງມີຂໍ້ບົກພ່ອງ: ປະເດັນທີ່ໄດ້ນຳສະເໜີໃນກອງປະຊຸມພົບປະຄະນະກະຊວງ

ໃນປັດຈຸບັນ ແຜນແມ່ບົດກ່ຽວກັບການຈັດແບ່ງທີ່ດິນຍັງບໍ່ທັນໄດ້ຮັບຮອງເປັນທາງການເທື່ອ ເຊິ່ງ ຍັງພົບປະເດັນ ກ່ຽວກັບ ການຂາດຂໍ້ບັງຄັບທີ່ຊັດເຈນ ເຊິ່ງສົ່ງຜົນໃຫ້ເກີດຄວາມສັບສົນ ໃນວຽກງານການຄຸ້ມຄອງທີ່ດິນ ແລະ ສ້າງຜົນເສຍຫາຍໃຫ້ແກ່ ການພັດທະນາປະເທດຊາດ. ກອງປະຊຸມທົ່ວປະເທດ ຂອງຄະນະກະຊວງ ກ່ຽວກັບທີ່ດິນ ໄດ້ຊີ້ໃຫ້ເຫັນເຖິງປັດໄຈ ແລະ ຊ່ອງທາງໃນການແກ້ໄຂບັນຫາ ທີ່ເກີດຂຶ້ນກ່ຽວກັບການຄຸ້ມຄອງທີ່ດິນໃນຊ່ວງທົດສະວັດທີ່ຜ່ານມາ. ເຊິ່ງໃນກອງປະຊຸມດັ່ງກ່າວນັ້ນ ໄດ້ລາຍງານເຖິງ 10 ຂໍ້ຫຼັກ ທີ່ເປັນຕົ້ນເຫດໃຫ້ ວຽກງານຄຸ້ມຄອງທີ່ດິນຂາດປະສິດທິພາບ. ກອງປະຊຸມດັ່ງກ່າວ ແມ່ນທ່ານ ສົມມາດ ພົນເສນາ, ລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນປະທານໃນການເປີດກອງປະຊຸມ ທີ່ໄດ້ຈັດຂຶ້ນໃນລະຫວ່າງວັນທີ 20-22 ທັນວາ 2017.

*ອ່ານຂ່າວນີ້ເພີ່ມເຕີມ**ທີ່ນີ້**.*

ໃນຂະນະດຽວກັນ, ນາຍົກລັດຖະມົນຕີ ທ່ານທອງລຸນ ສີສຸລິດ ໄດ້ເນັ້ນວ່າ ນະໂຍບາຍຂອງລັດຖະບານກ່ຽວກັບການນຳໃຊ້ທີ່ດິນຕ້ອງເພີ່ມມູນຄ່າໃຫ້ແກ່ທີ່ດິນ ແລະ ສ້າງຜົນປະໂຫຍດໃຫ້ແກ່ທຸກໆຄົນທີ່ຢູ່ໃນປະເທດ. ທ່ານນາຍົກລັດຖະມົນຕີສົນທະນາກ່ຽວກັບນະໂຍບາຍກັບບັນດາພະນັກງານຈາກຫຼາຍພາກສ່ວນ ແລະ ບັນດາພະນັກງານທ້ອງຖິ່ນ ໃນກອງປະຊຸມຄະນະກະຊວງແຫ່ງຊາດທີ່ໄດ້ຈັດຂຶ້ນລະຫວ່າງວັນທີ 20-22 ທັນວາ 2017.

## 100ຄອບຄົວຖືກຜົນກະທົບຈາກໂຄງການພັດທະນາ ເຂດເສດຖະກິດພິເສດ ຢູ່ຄອນພະເພັງ, ແຂວງຈຳປາສັກ, ລາວ

ໃນປັດຈຸບັນ ຕາມການລາຍງານຂອງຂ່າວແຈ້ງວ່າ ການສຶກສາຄວາມເປັນໄປໄດ້ໃນການພັດທະນາເຂດເສດຖະກິດພິເສດໃນເຂດຄອນພະເພັງໄດ້ສຳເລັດແລ້ວ ຫຼັງຈາກທີ່ລັດຖະບານໄດ້ເປີດໄຟຂຽວໃຫ້ບໍລິສັດຈີນ ເຮັດບົດສຶກສາຄວາມເປັນໄປໄດ້ໃນການພັດທະນາ ເຂດເສດຖະກິດພິເສດຢູ່ແຂວງຈຳປາສັກ,ພາກໃຕ້ຂອງປະເທດລາວ. ເຂດເສດຖະກິດພິເສດນີ້ມີຊື່ເອີ້ນວ່າ "ເຂດເສດຖະກິດພິເສດ ມະຫານະທີສີພັນດອນ".

ໂຄງການພັດທະນາເຂດເສດຖະກິດ ພິເສດມະຫານະທີສີພັນດອນນີ້ແມ່ນຈະເລີ່ມພັດທະນາໃນປີ 2018 ເຊິ່ງກວມເອົາເນື້ອທີ່ 9,800 ເຮັກຕາ ແລະ ມີມູນຄ່າການລົງທຶນ ຫຼາຍກວ່າ 9 ຕື້ໂດລາ ໃນໄລຍະເວລາຄືນທຶນ 33 ປີ. ຂະນະທີ່ມີຜູ້ໄດ້ຮັບຜົນກະທົບຈາກໂຄງການທັງໝົດ 100 ກວ່າຄອບຄົວ.

*ອ່ານຂ່າວເພີ່ມເຕີມ**ທີ່ນີ້**.*



ແຜນການສ້າງຕຶກແຝດຢູ່ສີພັນດອນ

## ລັດຖະບານ ໄຟຂຽວໃຫ້ບໍລິສັດຫວຽດນາມ ສຳປະທານທີ່ດິນປູກຢາງພາລາຢູ່ແຂວງສາລະວັນ

ກະຊວງແຜນການ ແລະ ການລົງທຶນ (ຜທ) ໄດ້ຈັດພິທີເຊັນສັນຍາສຳປະທານ ໂຄງການປູກຢາງພາລາ ແລະ ສ້າງຕັ້ງໂຮງງານປຸງແຕ່ງ ຢູ່ເຂດເມືອງສະໝ້ອຍ, ແຂວງ ສາລະວັນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ກັບ ບໍລິສັດ ກາວຊູ ກວາງຈີ ຈຳກັດ.

ກ່ອນໜ້ານັ້ນ ໃນວັນທີ 20 ທັນວາ 2011 ຜ່ານມາບໍລິສັດໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັບລັດຖະບານ ເພື່ອສຳຫຼວດ ແລະ ສຶກສາຄວາມເປັນໄປໄດ້ໃນເນື້ອທີ່ 947 ເຮັກຕາ, ພາຍຫຼັງສຳຫຼວດ ສາມາດຄັດໄດ້ເນື້ອທີ່ຈຳນວນ 500 ເຮັກຕາ ທີ່ສາມາດປູກຢາງພາລາໄດ້ໂດຍມີໄລຍະສຳປະທານ 30 ປີ.

*ນີ້ຖືວ່າເປັນຄັ້ງທຳອິດ ທີ່ລັດຖະບານລາວໃຫ້ສຳປະທານທີ່ດິນແກ່ນັກລົງທຶນປູກຢາງພາລາ ຫຼັງຈາກທີ່ລັດຖະບານໄດ້ໂຈະການໃຫ້ສຳປະທານປູກຢາງພາລານັບແຕ່ເດືອນ ມິຖຸນາ ປີ 2012.* ໃນຂະນະດຽວກັນ ນັກວິຊາການລາວກໍ່ເຫັນວ່າ ນະໂຍບາຍການໃຫ້ສຳປະທານທີ່ດິນ ປູກຢາງພາລາຍັງບໍ່ມີຄວາມແນ່ນອນ.

*ອ່ານລາຍລະອຽດເພີ່ມເຕີມໄດ້**ທີ່ນີ້**.*



ສວນຢາງພາລາຢູ່ບ້ານຢີບ , ແຂວງເຊກອງ

## ການສື່ສານ ຂໍ້ມູນຂ່າວສານຂອງ LIWG

**ຊ່ອງທາງການສື່ສານ (ອອນລາຍ)**

### ອີເມລກຸ່ມ LIWG:

ເພື່ອເປັນການເຜີຍແຜ່ ແລະ ແບ່ງປັນຂໍ້ມູນຂ່າວສານ ກ່ຽວກັບປະເດັນທີ່ດິນໃນ ສປປ ລາວ ແກ່ບັນດາສະມາຊິກ, ກອງເລຂາ LIWG ໄດ້ເຜີຍແຜ່ຂໍ້ມູນ ແລະ ຂ່າວສານ ທັງພາສາລາວ ແລະ ພາສາອັງກິດ ເພື່ອຮັບປະກັນການໄດ້ຮັບຂໍ້ມູນຂອງສະຖານະການກ່ຽວກັບທີ່ດິນໃນລາວຢ່າງໃກ້ຊິດ ແລະ ທັນເຫດການທີ່ເກີດຂຶ້ນ.

ສຳລັບ ອີເມວກຸ່ມ LIWG ຍັງເປັນພື້ນທີ່ສຳລັບສະມາຊິກໃນການແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນ ລະຫວ່າງບັນດາສະມາຊິກດ້ວຍກັນ.

### Website ເວັບໄຊ໌

ຢູ່ໃນເວັບໄຊ໌ຂອງ LIWG ໄດ້ມີການນຳສະເໜີຂໍ້ມູນຂ່າວສານ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງກັບປະເດັນທີ່ດິນໃນປະເທດລາວເປັນປະຈຳ. ຜ່ານການວິເຄາະເຫັນວ່າຈຳນວນຜູ້ເຂົ້າມາຊົມເວັບໄຊ໌ພວກເຮົາແມ່ນ ເພີ່ມຂຶ້ນເລື້ອຍໆ ເຊິ່ງຕົວເລກສະແດງໃນທ້າຍເດືອນທັນວາ, 2017 ຈຳນວນຜູ້ເຂົ້າມາຊົມເວັບໄຊ໌ພວກເຮົາ ມີ 10,872 ຄົນ.

ທ່ານສາມາດຕິດຕາມພວກຂ່າວສານ ແລະ ຂໍ້ມູນຕ່າງໆກ່ຽວກັບທີ່ດິນໃນເວັບໄຊ໌ພວກເຮົາໄດ້ທີ່: www.laolandinfo.org

### ເຟສບຸກ LIWG

ສຳລັບພື້ນທີ່ເຟສບຸກ LIWG ແມ່ນເປັນພື້ນທີ່ໃນການແລກຂໍ້ມູນຂ່າວສານກ່ຽວກັບທີ່ດິນ, ນຳສະເໜີການເຄື່ອນໄຫວບັນດາກິດຈະກຳຂອງ LIWG ແລະ ເຜີຍແຜ່ຂໍ້ມູນຕ່າງໆກ່ຽວກັບທີ່ດິນໃນ ປະເທດລາວ. ຜ່ານມາຈຳນວນຜູ້ເຂົ້າມາໄລຄ໌ເພສ ຂອງພວກເຮົາແມ່ນເພີ່ມຂຶ້ນເລື້ອຍໆ ເຊິ່ງປັດຈຸບັນມີ 4,478 ຄົນ ເຂົ້າມາໄລຄ໌ ແລະ 4,490 ຕິດ ຕາມເພສຂອງພວກເຮົາ.

ໃນປັດຈຸບັນທ່ານສາມາດຕິດຕາມພວກເຮົາທາງເຟສບຸກໄດ້ທີ່: https://www.facebook.com/laolandinfo/

## ກິດຈະກຳໄຕມາດໜ້າ (ມັງກອນ-ມີນາ, 2018)

- ກອງປະຊຸມປະຈຳປີ ຂອງກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ
- ກອງປະຊຸມແລກປ່ຽນບົດຮຽນ ລະຫວ່າງ ອົງການຈັດຕັ້ງທາງສັງຄົມລາວ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບທີ່ດິນ, ປ່າໄມ້ແລະຊັບພະຍາກອນທຳມະຊາດ, ແລະ ສິ່ງແວດລ້ອມ
- ການເປີດໂຕປະຕິທິນກົດໝາຍໃນຂັ້ນທ້ອງຖິ່ນ
- ກິດຈະກຳຕ່າງໆຂອງ ສູນແຫ່ງການຮຽນຮູ້ ແລະ ແລກປ່ຽນຂໍ້ມູນທີ່ດິນ (LILC)

## ແຈ້ງການ

ພວກເຮົາຂໍສະແດງຄວາມຍິນດີ ແລະ ຕ້ອນຮັບສະມາຊິກໃໝ່ ຂອງ ຜູ້ປະສານງານສາກົນ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ, ທ່ານ ນາງວີໂອ ເລັນ ໂຟຣີວ ເຊິ່ງທ່ານໄດ້ໃຫ້ກຳເນີດລູກສາວ, ຊື່ນາງ ອາແມນດິນ ໃນວັນທີ 25 ພະຈິກ 2017. ຢູ່ໃນຊ່ວງພັກເກີດລູກນີ້, ທາງກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ໄດ້ມີອາສາສະໝັກ ຊື່ວ່າ ທ່ານນາງ ຊານ ບາເຕໂລ ມາເຮັດວຽກຮ່ວມກັບກອງເລຂາ ໃນຕຳແໜ່ງ ຜູ້ປະສານງານສາກົນ ລະຫວ່າງເດືອນ ພະຈິກ ປີ 2017 ຫາ ເດືອນ ມີນາ ປີ 2018.

**ຕິດຕໍ່ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່:**

**ໂທ:** +85630 9815657 **ອີເມວ:** info@laolandinfo.org

**ເວັບໄຊ:** www.laolandinfo.org **ເຟສບຸກ:** Land Information Working Group

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG